(ຮ່າງ)

# ດຳລັດວ່າດ້ວຍ
# ການປະເມີນຜົນນິຕິກຳ

## ໝວດທີ 1
## ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ມາດຕາ 2 ການປະເມີນຜົນນິຕິກຳ

ມາດຕາ 3 ນິຕິກຳທີ່ຕ້ອງປະເມີນຜົນການຈັດຕັ້ງປະຕິບັດ

ມາດຕາ 4 ຫຼັກການກ່ຽວກັບວຽກງານປະເມີນຜົນນິຕິກຳ

ມາດຕາ 5 ຂອບເຂດການນຳໃຊ້ດຳລັດ

## ໝວດທີ 2
## ຮູບການ ແລະ ເນື້ອໃນ ການປະເມີນຜົນນິຕິກຳ

ມາດຕາ 6 ຮູບການ ແລະ ເນື້ອໃນ ການປະເມີນຜົນນິຕິກຳ

ມາດຕາ 7 ການປະເມີນຜົນປົກກະຕິ

ມາດຕາ 8 ການປະເມີນຜົນກໍລະນີ ຈຳເປັນ, ຮີບດ່ວນ

ມາດຕາ 9 ເນື້ອໃນການປະເມີນຜົນນິຕິກຳ

ມາດຕາ  10 ອົງການປະເມີນຜົນນິຕິກາ

## ໝວດທີ 3
## ຂັ້ນຕອນປະເມີນຜົນນິຕິກຳ

ມາດຕາ 11 ຂັ້ນຕອນການປະເມີນຜົນນິຕິກຳ

ມາດຕາ 12 ການແຕ່ງຕັ້ງຄະນະຮັບຜິດຊອບ

ມາດຕາ 13 ການສ້າງແຜນດຳເນີນການປະເມີນຜົນນິຕິກຳ

ມາດຕາ 14 ການເກັບກຳຂໍ້ມູນ

ມາດຕາ 15 ການຄົ້ນຄວ້າ ແລະ ວິໄຈ ຂໍ້ມູນ

ມາດຕາ 16 ການດຳເນີນການປະເມີນຜົນນິຕິກຳ

ມາດຕາ 17 ການລາຍງານຜົນການປະເມີນນິຕິກຳ

## ໝວດທີ 4
## ຄວາມຮັບຜິດຊອບໃນການປະເມີນຜົນນິຕິກຳ

ມາດຕາ 18 ສິດ ແລະ ໜ້າທີ່ຂອງອົງການປະເມີນຜົນນິຕິກຳ

ມາດຕາ 19 ສິດ ແລະ ໜ້າທີ່ຂອງຂະແໜງການຍຸຕິທຳ

ມາດຕາ 20 ສິດ ແລະ ໜ້າທີ່ຂອງໜ່ວຍງານນິຕິກຳ

## ໝວດທີ 5
## ບົດບັນຍັດສຸດທ້າຍ

ມາດຕາ 21 ການຈັດຕັ້ງປະຕິບັດ
ມາດຕາ 22 ຜົນສັກສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ລັດຖະບານ** ເລກທີ............/ລບ

ນະຄອນຫຼວງວຽງຈັນ, ວັນທີ.................

(ຮ່າງ)

# ດຳລັດວ່າດ້ວຍ
# ການປະເມີນຜົນນິຕິກຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງຍຸຕິທຳ ສະບັບເລກທີ ......../ກຍ, ລົງວັນທີ.......

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ຂັ້ນຕອນ ກ່ຽວກັບ ການປະເມີນຜົນນິຕິກຳ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ດຳເນີນໄປຢ່າງມີ ປະສິດທິພາບ ແລະ ປະສິດທິຜົນ, ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ ຮັບປະກັນໃຫ້ນິຕິກຳ ມີຄວາມສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນ, ສະພາບເສດຖະກິດ-ສັງຄົມ, ສາມາດຈັດຕັ້ງປະຕິບັດໄດ້ ປະກອບສ່ວນເຂົ້າໃນການສ້າງລັດທີ່ຄຸ້ມຄອງສັງຄົມດ້ວຍກົດໝາຍ.

**ມາດຕາ 2 ການປະເມີນຜົນນິຕິກຳ**

ການປະເມີນຜົນນິຕິກຳ ແມ່ນ ການຕີລາຄາ ແລະ ປະເມີນ ປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດບາງບົດບັນຍັດຂອງນິຕິກຳໃດໜຶ່ງ ຫຼື ທັງໝົດນິຕິກຳນັ້ນ ເພື່ອປັບປຸງແກ້ໄຂບັນຫາທີ່ບໍ່ສອດຄ່ອງກັບສະພາບການພັດທະນາໃນແຕ່ລະໄລຍະ, ບໍ່ສອດຄ່ອງກັບນິຕິກຳໃນລະບົບນິຕິກຳ, ເປັນຊ່ອງວ່າງ, ມີຜົນກະທົບ ຫຼື ບໍ່ສາມາດຈັດຕັ້ງປະຕິບັດໄດ້.

**ມາດຕາ 3 ນິຕິກຳທີ່ຕ້ອງປະເມີນການຈັດຕັ້ງປະຕິບັດ**

ນິຕິກຳທີ່ຕ້ອງປະເມີນຜົນການຈັດຕັ້ງປະຕິບັດ ແມ່ນ ນິຕິກຳທີ່ມີຜົນບັງຄັບທົ່ວໄປ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ຊຶ່ງປະກອບດ້ວຍ:

1. ກົດໝາຍ;
2. ລັດຖະບັນຍັດ ຂອງປະທານປະເທດ;
3. ດຳລັດ ຂອງລັດຖະບານ;
4. ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ;
5. ຂໍ້ຕົກລົງ ຂອງລັດຖະມົນຕີ, ຫົວໜ້າອົງການຂອງລັດ;
6. ຂໍ້ຕົກລົງ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
7. ນິຕິກຳອື່ນ ຕາມການຕົກລົງຂອງອົງການທີ່ມີສິດອຳນາດ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານປະເມີນຜົນນິຕິກຳ**

ວຽກງານປະເມີນຜົນນິຕິກຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ;
2. ມີແຜນການ ແລະ ປະຕິບັດຕາມຂັ້ນຕອນຂອງການປະເມີນຜົນນິຕິກຳ;
3. ປະສານສົມທົບກັບຂະແໜງການ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ນຳໃຊ້ສຳລັບ ການປະເມີນຜົນນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງ ລັດຖະບານ ແລະ ອົງການປົກຄອງຂັ້ນແຂວງ.

## ໝວດທີ 2
## ຮູບການ ແລະ ເນື້ອໃນ ການປະເມີນຜົນນິຕິກຳ

**ມາດຕາ 6 ຮູບການປະເມີນຜົນນິຕິກຳ**

ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ມີຮູບການ ດັ່ງນີ້:

1. ປະເມີນຜົນ ປົກກະຕິ;
2. ປະເມີນຜົນກໍລະນີ ຈຳເປັນ, ຮີບດ່ວນ.

**ມາດຕາ 7 ການປະເມີນຜົນປົກກະຕິ**

ການປະເມີນຜົນປົກກະຕິ ແມ່ນ ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໂດຍອົງການປະເມີນຜົນນິຕິກຳ ພາຍຫຼັງທີ່ນິຕິກຳນັ້ນ ໄດ້ຖືກຈັດຕັ້ງປະຕິບັດໃນໄລຍະໃດໜຶ່ງ ຊຶ່ງອົງການດັ່ງກ່າວ ຕ້ອງກຳນົດແຜນການປະເມີນຜົນນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເປັນແຕ່ລະປີ ຫຼື ແຕ່ລະໄລຍະ.

**ມາດຕາ 8 ການປະເມີນຜົນກໍລະນີ ຈຳເປັນ, ຮີບດ່ວນ**

ການປະເມີນຜົນກໍລະນີ ຈຳເປັນ, ຮີບດ່ວນ ແມ່ນ ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໂດຍອົງການປະເມີນຜົນນິຕິກຳ ເມື່ອເຫັນວ່າ ນິຕິກຳທີ່ວາງອອກນັ້ນ ຂັດກັບນິຕິກຳອື່ນ, ບໍ່ສາມາດຈັດຕັ້ງປະຕິບັດໄດ້, ເປັນຊ່ອງຫວ່າງ, ບໍ່ຮັດກຸມ, ບໍ່ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຫຼື ມີການ ສະເໜີ, ຕິກລິງ ຂອງອົງການທີ່ມີສິດອຳນາດ.

**ມາດຕາ 9 ເນື້ອໃນການປະເມີນຜົນນິຕິກຳ**

ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຕ້ອງຕີລາຄາ ເນື້ອໃນ ດັ່ງນີ້:

1. ການໂຄສະນາ ເຜີຍແຜ່ ແລະ ຍົກສູງສະຕິເຄົາລົບນິຕິກຳ;
2. ການສ້າງ ຫຼື ປັບປຸງກົນໄກການຈັດຕັ້ງປະຕິບັດນິຕິກຳ ລວມທັງ ການຜັນຂະຫຍາຍນິຕິກຳ ເປັນອັນລະອຽດ;
3. ການຝຶກອົບຮົມ, ການຍົກລະດັບຄວາມຮູ້ ຄວາມສາມາດຂອງພະນັກງານ-ລັດຖະກອນ ທີ່ຮັບຜິດຊອບຈັດຕັ້ງປະຕິບັດນິຕິກຳ;
4. ການກວດການິຕິກຳທີ່ຂັດກັນ, ເປັນຊ່ອງວ່າງ, ມີຜົນກະທົບ ຫຼື ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດນິຕິກຳໄດ້;
5. ການສະໜອງ ຂໍ້ມູນ ຂ່າວສານ ແລະ ການບໍລິຫານຈັດການ ເພື່ອອຳນວຍຄວາມສະດວກ ແລະ ການສະໜອງການບໍລິການປະຊາຊົນ;
6. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 10 ອົງການປະເມີນຜົນນິຕິກຳ**

ອົງການປະເມີນຜົນນິຕິກຳ ແມ່ນ ອົງການທີ່ຮັບຜິດຊອບສ້າງນິຕິກຳ ຊຶ່ງມີໜ້າທີ່ ແລະ ຄວາມຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

## ໝວດທີ 3
## ຂັ້ນຕອນການປະເມີນຜົນນິຕິກຳ

**ມາດຕາ 11 ຂັ້ນຕອນການປະເມີນຜົນນິຕິກຳ**

ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບ;
2. ສ້າງແຜນດຳເນີນການປະເມີນຜົນນິຕິກຳ;
3. ເກັບກຳຂໍ້ມູນ;
4. ຄົ້ນຄວ້າ ແລະ ວິໄຈ ຂໍ້ມູນ;
5. ດຳເນີນການປະເມີນນິຕິກຳ;
6. ລາຍງານຜົນການປະເມີນນິຕິກຳ.

**ມາດຕາ 12 ການແຕ່ງຕັ້ງຄະນະຮັບຜິດຊອບ**

ກະຊວງ ຫຼື ອົງການລັດທຽບເທົ່າກະຊວງ ແຕ່ງຕັ້ງຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດນິຕິກຳຂອງຕົນ ໂດຍແມ່ນ ຮອງລັດຖະມົນຕີ ຫຼື ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ເປັນຫົວໜ້າຄະນະ ແລະ ປະກອບດ້ວຍ ຫົວໜ້າໜ່ວຍງານນິຕິກຳ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງ, ຜູ້ຊ່ຽວຊານ ຫຼື ນັກວິທະຍາສາດຈຳນວນໜຶ່ງ ເປັນຄະນະ.

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໂດຍແມ່ນ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນຫົວໜ້າຄະນະ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງທີ່ກ່ຽວຂ້ອງໂດຍກົງ ເປັນຮອງຫົວໜ້າຄະນະ, ມີຜູ້ຕາງໜ້າພະແນກຍຸຕິທຳ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນກຳມະການ ແລະ ມີກອງເລຂາຊ່ວຍວຽກ.

**ມາດຕາ 13 ການສ້າງແຜນດຳເນີນການປະເມີນຜົນນິຕິກຳ**

ຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຕ້ອງສ້າງແຜນການດຳເນີນການປະເມີນຜົນນິຕິກຳ ໂດຍກຳນົດ ຈຸດປະສົງ, ລະດັບຄາດໝາຍ, ວິທີການ, ຂັ້ນຕອນ, ກຳນົດເວລາ, ງົບປະມານ ແລະ ບັນຫາອື່ນ ແລ້ວສະເໜີ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຮັບຮອງ.

**ມາດຕາ 14 ການເກັບກຳຂໍ້ມູນ**

ຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຕ້ອງເກັບກາຂໍ້ມູນທີ່ກ່ຽວຂ້ອງ ດັ່ງນີ້:

1. ການຈັດຕັ້ງປະຕິບັດນິຕິກຳທີ່ຕ້ອງປະເມີນ;
2. ການຈັດຕັ້ງປະຕິບັດນິຕິກຳອື່ນທີ່ພົວພັນ;
3. ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມໃນປັດຈຸບັນ ແລະ ສະພາບການກ່ຽວກັບສາຍພົວພັນສັງຄົມ ທີ່ກ່ຽວຂ້ອງກັບເນື້ອໃນຕົ້ນຕໍຂອງນິຕິກຳ;
4. ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ສັນຍາສາກົນທີ່ກ່ຽວຂ້ອງ ແລະ ບົດຮຽນຂອງຕ່າງປະເທດ;
5. ຂໍ້ມູນອື່ນ ທີ່ກ່ຽວຂ້ອງ.

ການເກັບກຳຂໍ້ມູນ ສາມາດດຳເນີນດ້ວຍການເກັບກຳຂໍ້ມູນດ້ວຍເອກະສານ, ຈັດກອງປະຊຸມປຶກສາຫາລື, ຈັດກອງປະຊຸມສຳມະນາແບບວົງແຄບ ຫຼື ວົງກວ້າງ, ການເຮັດແບບພິມສອບຖາມ, ການສຳພາດເປົ້າໝາຍ ຫຼື ວິທີການອື່ນ.

**ມາດຕາ 15 ການຄົ້ນຄວ້າ ແລະ ວິໄຈ ຂໍ້ມູນ**

ຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຕ້ອງນຳເອົາຂໍ້ມູນທີ່ໄດ້ຈາກການເກັບກຳນັ້ນ ມາໄຈ້ແຍກ, ກວດກາ, ກັ່ນຕອງ, ຊອກຫາສາເຫດ ຫຼື ທີ່ມາຂອງບັນຫາ ຢ່າງມີຂັ້ນຕອນ, ເປັນລະບົບ ແລະ ມີເປົ້າໝາຍທີ່ຈະແຈ້ງ, ສາມາດອະທິບາຍໄດ້ ຄວາມເປັນຈິງ, ສາຍພົວພັນ, ຄຸນລັກສະນະຂອງຂໍ້ມູນ ແລະ ຢັ້ງຢືນຄວາມຖືກຕ້ອງຂອງບັນຫາ ແລະ ເນື້ອໃນຂອງການປະເມີນໃນແຕ່ລະດ້ານ ເພື່ອໃຫ້ຮູ້ປະເດັນທີ່ຈະຕ້ອງສົ່ງເສີມ ແລະ ບັນຫາທີ່ຈະຕ້ອງແກ້ໄຂ.

**ມາດຕາ 16 ການດຳເນີນການປະເມີນນິຕິກຳ**

ການປະເມີນການຈັດຕັ້ງປະຕິບັດນິຕິກຳ ສາມາດດຳເນີນດ້ວຍການ ຈັດກອງປະຊຸມປຶກສາຫາລື, ສົ່ງເນື້ອໃນປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ມີຄຳເຫັນ ຫຼື ຮູບການອື່ນ ທີ່ເໝາະສົມ.

ການຈັດກອງປະຊຸມປຶກສາຫາລື ສາມາດດຳເນີນ ແບບເຊິ່ງໜ້າ ຫຼື ກອງປະຊຸມທາງໄກ ຊຶ່ງເນື້ອກອງປະຊຸມຕ້ອງກຳນົດ ຈຸດປະສົງ, ລະດັບຄາດໝາຍຂອງກອງປະຊຸມ, ເປົ້າໝາຍຜູ້ເຂົ້າຮ່ວມ ພ້ອມທັງສົ່ງແບບພິມສອບຖາມການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ, ຄຳຖາມເຈາະຈີ້ມ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ເປົ້າໝາຍທີ່ຈະເຂົ້າຮ່ວມ ຢ່າງຊ້າ ຫ້າ ວັນ ກ່ອນວັນເປີດກອງປະຊຸມ.

ການສົ່ງເນື້ອໃນປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ມີຄຳເຫັນນັ້ນ ຕ້ອງກຳນົດແຈ້ງ ຈຸດປະສົງ, ບັນຫາທີ່ຕ້ອງການໃຫ້ພາກສ່ວນທີ່ກ່ຽວຂ້ອງ ມີຄຳເຫັນ, ວັນ, ເວລາ ສົ່ງຄຳເຫັນຕອບກັບມາຍັງອົງການປະເມີນຜົນນິຕິກຳ ແລະ ຄັດຕິດແບບພິມສອບຖາມການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ.

**ມາດຕາ 17 ການລາຍງານຜົນການປະເມີນນິຕິກຳ**

ຄະນະຮັບຜິດຊອບເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຕ້ອງລາຍງານຜົນການປະເມີນນິຕິກຳ ຕໍ່ຫົວໜ້າອົງການຂອງຕົນ ເພື່ອພິຈາລະນາ.

ບົດລາຍງານຜົນການປະເມີນນິຕິກຳ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການດຳເນີນຂັ້ນຕອນການປະເມີນ;
2. ນິຕິກຳ, ບົດບັນຍັດຂອງນິຕິກຳ ສ່ວນໃດໜຶ່ງ ຫຼື ທັງໝົດ ທີ່ປະເມີນ;
3. ຄຳເຫັນຂອງພາກສ່ວນກ່ຽວຂ້ອງ ແລະ ຜູ້ຈັດຕັ້ງປະຕິບັດຕົວຈິງ;
4. ຕີລາຄາ ດ້ານດີ, ດ້ານອ່ອນ ແຕ່ລະເນື້ອໃນການປະເມີນຜົນນິຕິກຳ;
5. ວິທີການແກ້ໄຂ (ຖ້າມີ).

## ໝວດທີ 4
## ຄວາມຮັບຜິດຊອບໃນການປະເມີນຜົນນິຕິກຳ

**ມາດຕາ 18 ສິດ ແລະ ໜ້າທີ່ຂອງອົງການປະເມີນຜົນນິຕິກຳນິຕິກຳ**

ໃນການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ອົງການປະເມີນຜົນນິຕິກຳນິຕິກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນການ, ແຜນງານ, ໂຄງການ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
2. ຈັດຕັ້ງປະຕິບັດ ແຜນການ, ແຜນງານ, ໂຄງການ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;
3. ແຕ່ງຕັ້ງຄະນະຮັບຜິດຊອບ ປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;
4. ຮັບຮອງເອົາແຜນການເຄື່ອນໄຫວ ປະເມີນຜົນການຈັດຕັ້ງປະຕິບັດນິຕິກາ ຕາມການສະເໜີຂອງຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;
5. ພິຈາລະນາຮັບຮອງຜົນການປະເມີນການຈັດຕັ້ງປະຕິບັດນິຕິກຳ ຕາມການສະເໜີ ຂອງຄະນະຮັບຜິດຊອບການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;

6. ສະເໜີພາກສ່ວນທີ່ກ່ຽວຂ້ອງ ປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ກໍລະນີເຫັນວ່າ ເນື້ອໃນຂອງນິຕິກຳຂອງອົງການດັ່ງກ່າວ ຂັດກັບນິຕິກຳທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

7. ສ້າງ, ຍົກລະດັບ ຄວາມຮູ້, ຄວາມສາມາດ ກ່ຽວກັບປະເມີນການຈັດຕັ້ງປະຕິບັດນິຕິກຳໃຫ້ບຸກຄະລາກອນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

8. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະເມີນການຈັດຕັ້ງປະຕິບັດນິຕິກຳ;

9. ດຳເນີນການແກ້ໄຂຜົນຂອງປະເມີນການຈັດຕັ້ງປະຕິບັດນິຕິກຳ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຕໍ່ຂັ້ນເທິງຂອງຕົນ ແລະ ຂະແໜງການຍຸຕິທຳ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຂະແໜງການຍຸຕິທຳ**

ໃນການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຂະແໜງການຍຸຕິທຳ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ, ຊຸກຍູ້, ໃຫ້ການຮ່ວມມື ແລະ ແນະນຳ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;

2. ມີຄຳເຫັນຕໍ່ບົດລາຍງານຜົນການປະເມີນການຈັດຕັ້ງປະຕິບັດນິຕິກຳ ເພື່ອຮັບປະກັນຄຸນນະພາບ ລວມທັງການປະຕິບັດຂັ້ນຕອນຂອງການປະເມີນ;

3. ຈັດກອງປະຊຸມຄົ້ນຄວ້າ, ກວດກາເນື້ອໃນການປະເມີນ ໂດຍມີຜູ້ຕາງໜ້າຈາກ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ຜູ້ຊ່ຽວຊານ, ນັກວິທະຍາສາດ ເຂົ້າຮ່ວມ;

4. ເຂົ້າຮ່ວມ ເກັບກຳ, ສັງລວມຂໍ້ມູນ ທີ່ກ່ຽວຂ້ອງກັບນິຕິກຳທີ່ປະເມີນ;

5. ສະເໜີ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ແຕ່ງຕັ້ງຜູ້ຕາງໜ້າເຂົ້າຮ່ວມໃນການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

6. ສະເໜີ ສະໜອງຂໍ້ມູນ, ເອກະສານທີ່ກ່ຽວຂ້ອງກັບນິຕິກຳທີ່ປະເມີນ;

7. ລາຍງານຜົນການປະເມີນນິຕິກຳ ຕໍ່ອົງການທີ່ມີສິດອຳນາດ ພິຈາລະນາແກ້ໄຂ;

8. ແນະນຳ, ຝຶກອົບຮົມ ທັກສະ ແລະ ວິຊາຊີບການປະເມີນຜົນນິຕິກຳ ໃຫ້ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປະເມີນຜົນນິຕິກຳຢູ່ ກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ;

9. ສ້າງ ຈຸດປະສານງານ ແລະ ຖານຂໍ້ມູນ ເພື່ອເກັບຮັກສາ, ແລກປ່ຽນ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;

10. ສະຫຼຸບ ແລະ ລາຍງານ ວຽກງານການຈັດຕັ້ງປະຕິບັດນິຕິກຳ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງໜ່ວຍງານນິຕິກຳ**

ໃນການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໜ່ວຍງານນິຕິກຳ ຂອງກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນໃຈກາງ ປະສານສົມທົບກັບ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ພາຍໃນອົງການຕົນ ໃນການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ;

2. ຊຸກຍູ້, ແນະນຳ, ຕິດຕາມ, ກວດກາ ການປະເມີນການຈັດຕັ້ງປະຕິບັດນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງອົງການຕົນ;

3. ຄົ້ນຄວ້າບັນດາເນື້ອໃນທີ່ກ່ຽວຂ້ອງກັບນິຕິກຳທີ່ປະເມີນ;

4. ເຂົ້າຮ່ວມ ສຳຫຼວດ, ເກັບກຳຂໍ້ມູນຕົວຈິງທີ່ພົວພັນກັບນິຕິກຳທີ່ປະເມີນ;

5. ສະເໜີອົງການຮັບຜິດຊອບປະເມີນ ສະໜອງຂໍ້ມູນ, ເອກະສານທີ່ກ່ຽວຂ້ອງກັບນິຕິກຳທີ່ປະເມີນ;

6. ລາຍງານການຈັດຕັ້ງປະຕິບັດວຽກງານການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

### ມາດຕາ 21 ການຈັດຕັ້ງປະຕິບັດ

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

### ມາດຕາ 22 ຜົນສັກສິດ

ດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ທີ........................ເປັນຕົ້ນໄປ.

**ຕາງໜ້າລັດຖະບານແຫ່ງສປປລາວ**

**ນາຍົກລັດຖະມົນຕີ**